# ຄວາມເຂົ້າໃຈກ່ຽວກັບຜົນກະທົບຂອງ ADA ແລະ ສິດທິຄວາມພິການກ່ຽວກັບສະຫວັດດີການເດັກ



## ຄຳນິຍາມ

**ADA:** Americans with Disabilities Act (ກົດໝາຍວ່າດ້ວຍຄົນອາເມລິກາທີ່ມີຄວາມພິການ)

**ຄູ່ຮ່ວມທາງ:** ເມື່ອເວົ້າກ່ຽວກັບພາກທີ II ແລະ ໝວດ 504. ອາດຈະປະກອບດ້ວຍສະມາຊິກຄອບຄົວ, ໝູ່ເພື່ອນ ຫຼື ພັກພວກຂອງບຸກຄົນໃດໜຶ່ງ ທີ່ກຳລັງຊອກຫາ ຫຼື ໄດ້ຮັບການບໍລິການສະຫວັດດີການເດັກ.

**DCYF:** Department of Children, Youth, and Families (ພະແນກເດັກນ້ອຍ, ຊາວໜຸ່ມ ແລະ ຄອບຄົວ)

**ຄວາມພິການ:** ທັງ ADA ແລະ ໝວດ 504 ໄດ້ໃຫ້ນິຍາມແກ່ ຄວາມພິການວ່າເປັນ: "ຄວາມບົກຜ່ອງທາງດ້ານຮ່າງກາຍ ຫຼື ຈິດໃຈທີ່ ຈຳກັດການເຄື່ອນໄຫວກິດຈະກຳໃນຊີວິດຫຼັກຢ່າງໃຫຍ່ຫຼວງຢ່າງໜ້ອຍໜຶ່ງຢ່າງຂຶ້ນໄປ." ການເຄື່ອນໄຫວກິດຈະກຳໃນຊີວິດຫຼັກ ປະກອບດ້ວຍສິ່ງຕ່າງໆເຊັ່ນ: ການເບິ່ງແຍງດູແລຕົນເອງ, ການປະຕິບັດວຽກງານຕ່າງໆດ້ວຍຕົນເອງ, ການຫາຍໃຈ, ການປາກເວົ້າ, ການຍ່າງ, ການອ່ານ, ການຮຽນຮູ້, ການຕັ້ງສະມາທິ, ການເບິ່ງເຫັນ, ການໄດ້ຍິນ, ການກິນອາຫານ, ການນອນ ຫຼື ການເຮັດວຽກ. ການເຄື່ອນໄຫວກິດຈະກຳໃນຊີວິດຫຼັກ ຍັງປະກອບດ້ວຍການປະຕິບັດໜ້າທີ່ຂອງຮ່າງກາຍ, ລວມທັງສິ່ງຕ່າງໆເຊັ່ນ: ການປະຕິບັດໜ້າທີ່ຂອງລະບົບພູມຕ້ານທານ, ການຍ່ອຍອາຫານ, ລຳໄສ້ ຫຼື ພົກຍ່ຽວ, ລະບົບປະສາດ, ສະໝອງ ຫຼື ການຈະເລີນພັນ.

**ໝວດ 504:** ໝວດ 504 ຂອງກົດໝາຍວ່າດ້ວຍການຟື້ນຟູ ປີ 1973 ແມ່ນກົດໝາຍຂອງລັດຖະບານກາງທີ່ປົກປ້ອງບຸກຄົນຈາກການຈຳແນກ ໂດຍອີງໃສ່ຄວາມພິການ. ໝວດ 504 ກຳນົດວ່າ ຫ້າມບໍ່ໃຫ້ລະເວັ້ນບຸກຄົນພິການທີ່ມີເງື່ອນໄຂ ຈາກການເຂົ້າຮ່ວມ ຫຼື ຫ້າມບໍ່ໃຫ້ປະຕິເສດຜົນປະໂຫຍດໃນການບໍລິການ, ໂຄງການ ຫຼື ກິດຈະກຳຂອງໜ່ວຍງານໃດໜຶ່ງທີ່ໄດ້ຮັບການຊ່ວຍເຫຼືອດ້ານການເງິນຈາກລັດຖະບານກາງ.

**ພາກທີ II:** ພາກທີ II ຂອງ ADA ຫ້າມບໍ່ໃຫ້ມີການລະເວັ້ນບຸກຄົນພິການທີ່ມີເງື່ອນໄຈ ຈາກການເຂົ້າຮ່ວມ ຫຼື ຫ້າມບໍ່ໃຫ້ປະຕິເສດຜົນປະໂຫຍດໃນການບໍລິການ, ໂຄງການ ຫຼື ກິດຈະກຳຂອງໜ່ວຍງານສາທາລະນະ ຫຼື ຖືກຈຳແນກໂດຍໜ່ວຍງານດັ່ງກ່າວ. ພາກທີ II ປະກອບມີບັນດາອີງການສະຫວັດດີການເດັກ ແລະ ລະບົບສານຕ່າງໆ.

## ຄວາມຮັບຜິດຊອບ

- ໜ່ວຍງານ ແລະ ພະນັກງານຂອງຕົນ ແມ່ນຕ້ອງໄດ້ຮັບປະກັນໃຫ້ພໍ່ແມ່ ແລະ ເດັກພິການທີ່ເຂົ້າຮ່ວມກັບ DCYF ສາມາດເຂົ້າເຖິງການບໍລິການຕ່າງໆໄດ້.
- ບັນດາການບໍລິການ ແລະ ໂຄງການຕ່າງໆ ຈະໄດ້ຮັບການດັດແກ້ ເພື່ອຮັບປະກັນໃຫ້ບັນດາຜູ້ເຂົ້າຮ່ວມສາມາດໄດ້ຮັບຜົນປະໂຫຍດຈາກພວກມັນ.
- ໂຄງການຕ່າງໆຕ້ອງໃຫ້ໂອກາດເທົ່າທຽມກັນແກ່ຄົນພິການໃນການເຂົ້າຮ່ວມ ແລະ ໄດ້ຮັບຜົນປະໂຫຍດບັນດາຈາກໂຄງການ, ການບໍລິການ ແລະ ກິດຈະກຳຕ່າງໆຂອງໜ່ວຍງານ.
- ໂຄງການຕ່າງໆຕ້ອງມີການດັດແກ້ທີ່ສົມເຫດສົມຜົນຕໍ່ບັນດານະໂຍບາຍ, ແນວທາງການປະຕິບັດ ແລະ ຂັ້ນຕອນຕ່າງໆ ເມື່ອມີຄວາມຈຳເປັນ ເພື່ອຫຼີກເວັ້ນການຈຳແນກ.
- DCYF ແລະ ພະນັກງານຂອງຕົນ ຈະດຳເນີນຂັ້ນຕອນທີ່ເໝາະສົມ ເພື່ອຮັບປະກັນໃຫ້ການຕິດຕໍ່ສື່ສານກັບຜູ້ສະໝັກ, ຜູ້ເຂົ້າຮ່ວມ, ສະມາຊິກສາທາລະນະຊົນ ແລະ ຄູ່ຮ່ວມທາງ ທີ່ມີຄວາມພິການ ແມ່ນມີປະສິດທິຜົນໂດຍຜ່ານການໃຫ້ການຊ່ວຍເຫຼືອ ແລະ ການບໍລິການເສີມຕ່າງໆ.

DCYF ແລະ ບັນດາພະນັກງານຂອງຕົນ ມີຄວາມຮັບຜິດຊອບໃນການວາງແຜນການບໍລິການກໍລະນີເປັນລາຍບຸກຄົນ ໂດຍປາສະຈາກການສົມມຸດຕິຖານ ໂດຍອີງໃສ່ຄວາມພິການຂອງບຸກຄົນ. ໜ່ວຍງານດັ່ງກ່າວມີຄວາມຮັບຜິດຊອບໃນການຮັບປະກັນໃຫ້ເດັກນ້ອຍ, ຊາວໜຸ່ມ ແລະ ຄອບຄົວໃນ Washington ມີໂອກາດເຕັມທີ່ ແລະ ເທົ່າທຽມກັນໃນການເຂົ້າເຖິງໂຄງການ ແລະ ການບໍລິການຂອງ DCYF.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການອຳນວຍຄວາມສະດວກຂອງ ADA, ກະລຸນາຕິດຕໍ່ຜູ້ປະສານງານຂອງ ADA ທີ່ 360-480-7230 ຫຼື ສົ່ງອີເມວຫາ **dcyf.adaaccessibility@dcyf.wa.gov.**

## ບັນດາຫຼັກການພື້ນຖານພາຍໃຕ້ພາກທີ II ຂອງ ADA ແລະ ໝວດ 504

### ການປະຕິບັດຕໍ່ແບບສະເພາະລາຍບຸກຄົນ.

ບຸກຄົນທີ່ມີຄວາມພິການຕ້ອງໄດ້ຮັບການປະຕິບັດເປັນແຕ່ລະກໍລະນີ ໂດຍສອດຄ່ອງກັບຄວາມເປັນຈິງ ແລະ ຫຼັກຖານທີ່ເປັນຮູບປະທຳ. ຕົວຢ່າງ: ການເອົາເດັກນ້ອຍອອກຈາກພໍ່ແມ່ທີ່ມີຄວາມພິການ ໂດຍອີງໃສ່ຄວາມເຊື່ອແບບບູຮານຕາຍຕົວ, ບໍ່ໄດ້ຮັບການສະໜັບສະໜູນໂດຍການປະເມີນສ່ວນບຸກຄົນ, ວ່າຄົນພິການບໍ່ສາມາດເປັນພໍ່ແມ່ໄດ້ຢ່າງປອດໄພ ແມ່ນຖືກຫ້າມ. ການປະຕິບັດຕໍ່ແບບສະເພາະລາຍບຸກຄົນໄດ້ຮັບການເນັ້ນໜັກໂດຍຄຳຕັດສິນຂອງສານສູງສຸດແຫ່ງWashington M.A.S.C ປີ 2021.

**ຕົວຢ່າງ:** ເມື່ອສົນທະນາກ່ຽວກັບໄພຂົ່ມຂູ່ດ້ານຄວາມປອດໄພ, ການສົນທະນາຄວນເນັ້ນໃສ່ພຶດຕິກຳ ແລະ/ຫຼື ການກະທຳຂອງພໍ່ແມ່. ຄວາມພິການທີ່ມີຢູ່ແລ້ວ ບໍ່ຄວນຖືກລະບຸ ຫຼື ຖືກມອງວ່າເປັນໄພຂົ່ມຂູ່ດ້ານຄວາມປອດໄພ.

## ບັນດາຫຼັກການພື້ນຖານພາຍໃຕ້ພາກທີ II ຂອງ ADA ແລະ ໝວດ 504 (ຕໍ່)

### ໂອກາດອັນເຕັມທີ່ ແລະ ເທົ່າທຽມກັນ.

ບຸກຄົນພິການຕ້ອງໄດ້ຮັບໂອກາດແບບດຽວກັນທີ່ຈະໄດ້ຮັບຜົນປະໂຫຍດຈາກ ຫຼື ເຂົ້າຮ່ວມໃນບັນດາໂຄງການສະຫວັດດີການເດັກ, ການບໍລິການ ແລະ ກິດຈະກຳຕ່າງໆ ແບບເທົ່າທຽມກັນກັບບຸກຄົນທີ່ບໍ່ພິການ. ໃນການໃຫ້ໂອກາດເຕັມທີ່ ແລະ ເທົ່າທຽມກັນນັ້ນ, ໜ່ວຍງານສະຫວັດດີການເດັກ ຕ້ອງທຳການດັດແກ້ຢ່າງສົມເຫດສົມຜົນ ແລະ ຮັບປະກັນໃຫ້ມີການຕິດຕໍ່ສື່ສານທີ່ມີປະສິດທິຜົນ.

### a. ການດັດແກ້ຢ່າງສົມເຫດສົມຜົນ

ການດຳເນີນການດັດແກ້ຢ່າງສົມເຫດສົມຜົນອາດຈະຮຽກຮ້ອງໃຫ DCYF ຕ້ອງໄດ້ໃຫ້ການຊ່ວຍເຫຼືອ, ຜົນປະໂຫຍດ ແລະ ການບໍລິການແບບຍົກລະດັບ, ເພີ່ມເຕີມ ຫຼື ເສີມ ທີ່ແຕກຕ່າງກັນກັບທີ່ໄດ້ສະໜອງໃຫ້ພໍ່ແມ່ຄົນອື່ນໆ ໃນເວລາທີ່ມີຄວາມຈຳເປັນ ເພື່ອຮັບປະກັນໃຫ້ມີໂອກາດເທົ່າທຽມກັນທີ່ຈະໄດ້ຮັບຜົນໄດ້ຮັບດຽວກັນ ຫຼື ໄດ້ຮັບຜົນປະໂຫຍດອັນດຽວກັນ. ຄຳຕັດສິນ M.A.S.C ຂອງ Washington ປ 2021 ໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນຂອງການດັດແກ້ທີ່ສົມເຫດສົມຜົນສຳລັບພໍ່ແມ່ທີ່ມີຄວາມພິການທາງດ້ານສະຕິປັນຍາ/ການພັດທະນາການ ຫຼື ສະພາວະທາງປະສາດທີ່ຄ້າຍຄືກັນອື່ນໆ.

**ຕົວຢ່າງ 1:** ຖ້າມີການຈັດຫ້ອງຮຽນສຳລັບພໍ່ແມ່ ແລະ ພໍ່ແມ່ທີ່ມີ intellectual disability (ຄວາມພິການທາງດ້ານສະຕິປັນຍາ) ຕ້ອງການວິທີການໃນການສິດສອນທີ່ແຕກຕ່າງ ຫຼື ຕ້ອງການເວລາສອນຫຼາຍຂຶ້ນ ເພື່ອການເຮັດຊ້ຳຄືນ ແລະ ການຝຶກຝົນ, ໜ່ວຍງານຄວນໃຫ້ເວລາເພີ່ມແກ່ພໍ່ແມ່ ແລະ/ຫຼື ໃຫ້ວິທີການສິດສອນທີ່ພໍ່ແມ່ຕ້ອງການ ໃນນາມການດັດແກ້ທີ່ສົມເຫດສົມຜົນພາຍໃຕ້ ADA.

**ຕົວຢ່າງ 2:** ພໍ່ແມ່ທີ່ມີຄວາມບົກຜ່ອງທາງດ້ານສະຕິປັນຍາ ເຊັ່ນ: ການບາດເຈັບຕໍ່ສະໝອງ ຫຼື ສະພາວະທາງລະບົບປະສາດອື່ນໆ, ລວມທັງຄວາມພິການທາງດ້ານສະຕິປັນຍາ/ການພັດທະນາການ, ອາດຈະມີຄວາມບົກຜ່ອງທີ່ສົ່ງຜົນກະທົບຕໍ່ຂະບວນການທາງສະຕິປັນຍາ ຫຼື ທັກສະທາງຈິດທີ່ຊ່ວຍວາງແຜນສະເພາະບຸກຄົນ, ການຕິດຕາມ ແລະ ການປະຕິບັດເປົ້າໝາຍຂອງເຂົາເຈົ້າ. ທັກສະ ຫຼື ຂະບວນການເຫຼົ່ານີ້ ມັກຈະເອີ້ນວ່າ ໜ້າທີ່ການບໍລິຫານ ແລະ ປະກອບມີສິ່ງຕ່າງໆ ເຊັ່ນ: ການຄວບຄຸມຄວາມຕັ້ງໃຈ, ຄວາມຈຳໃນການເຮັດວຽກ, ການຍັບຍັ້ງຊັ່ງໃຈ ແລະ ການແກ້ໄຂບັນຫາ. ບຸກຄົນບາງຄົນທີ່ປະສົບກັບຄວາມບົກຜ່ອງໃນການເຮັດໜ້າທີ່ບໍລິຫານ ອາດຈະຕ້ອງການຜູ້ຈົດບັນທຶກ ຫຼື ໃຫ້ຄຳບັນຍາຍແບບທັນເຫດການໃຫ້ໃນລະຫວ່າງການປະຊຸມ ແລະ ການໄຕ່ສວນ ເພື່ອຊ່ວຍໃຫ້ມີຄວາມເຂົ້າໃຈ. ການໃຫ້ການບໍລິການດັ່ງກ່າວ ຈະຖືກມອງວ່າເປັນການດັດແກ້ທີ່ສົມເຫດສົມຜົນ ແລະ ເປັນການໃຫ້ການຕິດຕໍ່ສື່ສານທີ່ມີປະສິດທິຜົນພາຍໃຕ້ ADA.

### b. ການຕິດຕໍ່ສື່ສານທີ່ມີປະສິດທິຜົນ

DCYF ຕ້ອງໃຫ້ການສື່ສານທີ່ມີປະສິດທິຜົນພາຍໃຕ້ ADA ເພື່ອຮັບປະກັນໃຫ້ບັນດາພໍ່ແມ່ທີ່ມີຄວາມພິການທາງດ້ານສະຕິປັນຍາມີຄວາມເຂົ້າໃຈເຖິງການບໍລິການທີ່ມອບໃຫ້.

ຂັ້ນຕອນຕ່າງໆທີ່ເໝາະສົມ — ລວມທັງການໃຫ້ການຊ່ວຍເຫຼືອ ແລະ ການບໍລິການຕ່າງໆ ເຊັ່ນ: ນາຍແປພາສາມື, ຜູ້ຈົດບັນທຶກ, ການນຳໃຊ້ພາສາທີ່ເຂົ້າໃຈງ່າຍ ແລະ ອື່ນໆ — ແມ່ນຕ້ອງໄດ້ນຳມາປະຕິບັດ ເພື່ອຮັບປະກັນໃຫ້ບຸກຄົນທີ່ມີຄວາມພິການດ້ານການຕິດຕໍ່ສື່ສານ ແລະ ການປະມວນຜົນມີຄວາມເຂົ້າໃຈເຖິງສິ່ງທີ່ໄດ້ເວົ້າໄປ ຫຼື ຂຽນລົງໄປ ແລະ ສາມາດຕິດຕໍ່ສື່ສານໄດ້ຢ່າງປະສິດທິຜົນຄືກັນກັບບຸກຄົນທີ່ບໍ່ພິການ. ບັນດາໜ່ວຍງານສະຫວັດດີການເດັກ ຕ້ອງໃຫ້ຂໍ້ຄວນພິຈາລະນາຕົ້ນຕໍຕໍ່ກັບການຊ່ວຍເຫຼືອ ຫຼື ການບໍລິການທີ່ບຸກຄົນດັ່ງກ່າວໄດ້ຮ້ອງຂໍ. ບຸກຄົນບາງຄົນອາດຈະບໍ່ຮູ້ວ່າຈະສາມາດໃຫ້ການຊ່ວຍເຫຼືອ ຫຼື ການບໍລິການປະເພດໃດ ເພື່ອຊ່ວຍໃຫ້ເຂົາເຈົ້າມີຄວາມເຂົ້າໃຈເຖິງສິ່ງທີ່ກຳລັງສື່ສານກັນ. ຖ້າມີຄຳຖາມເກີດຂຶ້ນວ່າຈະໃຫ້ການຊ່ວຍເຫຼືອ ຫຼື ການບໍລິການອັນໃດ ເພື່ອຮັບປະກັນໃຫ້ການສື່ສານມີປະສິດທິພາບ, ໃຫ້ຕິດຕໍ່ຜູ້ປະສານງານ ADA ຂອງ DCYF.

ຕົວຢ່າງຂອງການຊ່ວຍເຫຼືອ ແລະ ການບໍລິການ ປະກອບມີ ນາຍແປພາສາທີ່ມີຄຸນວຸດທິ, ຜູ້ຈົດບັນທຶກ, ການໃຫ້ຄຳບັນຍາຍແບບທັນເຫດການ, ເຕັກໂນໂລຊີເອເລັກໂທນິກ ແລະ ຂໍ້ມູນຂ່າວສານທີ່ສາມາດເຂົ້າເຖິງໄດ້, ເອກະສານເປັນລາຍລັກອັກສອນ ແລະ ອຸປະກອນ ຫຼື ລະບົບຊ່ວຍຟັງ, ການບັນທຶກສຽງ, ເອກະສານເປັນອັກສອນນູນ, ເອກະສານພິມເປັນຕົວໃຫຍ່ ແລະ ອື່ນໆ.

ການໃຫ້ການຕິດຕໍ່ສື່ສານທີ່ມີປະສິດຕິຜົນອາດຈະສາມາດປ່ຽນແປງໄດ້ ໂດຍຂຶ້ນຢູ່ກັບສະຖານທີ່, ຈຳນວນຄົນເຂົ້າຮ່ວມ ແລະ ຫົວຂໍ້ໃນການສົນທະນາ. ປະເພດຂອງການຊ່ວຍເຫຼືອ ຫຼື ການບໍລິການຈະແຕກຕ່າງກັນໄປ ຕາມວິທີການໃນການຕິດຕໍ່ສື່ສານທີ່ບຸກຄົນທີ່ມີຄວາມພິການນຳໃຊ້; ລັກສະນະ, ຄວາມຍາວ ແລະ ຄວາມຊັບຊ້ອນຂອງການຕິດຕໍ່ສື່ສານທີ່ກ່ຽວຂ້ອງ ແລະ ສະພາບການທີ່ການຕິດຕໍ່ສື່ສານເກີດຂຶ້ນ.

**ຕົວຢ່າງ 1:** ສຳລັບການປະຊຸມກໍລະນີທີ່ກ່ຽວຂ້ອງກັບພໍ່ແມ່ທີ່ເປັນຄົນຫູໜວກ, ອາດຈະຈຳເປັນຕ້ອງໄດ້ຈັດໃຫ້ມີນາຍແປພາສາມືແບບເຊິ່ງໜ້າ. ສຳລັບຂໍ້ຄວາມງ່າຍດາຍ ເຊັ່ນ: ວັນທີນັດໝາຍ ຫຼື ທີ່ຢູ່, ບັນທຶກ ຫຼື ຂໍ້ຄວາມທີ່ຂຽນດ້ວຍມືກໍອາດຈະພຽງພໍແລ້ວ.

*ໝາຍເຫດ: ການຕິດຕໍ່ສື່ສານຜ່ານການຂຽນບັນທຶກສາມາດນຳໄປໃຊ້ໄດ້ສຳລັບການສົນທະນາທີ່ງ່າຍດາຍຫຼາຍໄດ້. ພາສາມື ແມ່ນພາສາທີ່ແຕກຕ່າງໃນຕົວຂອງມັນເອງ, ມັນບໍ່ແມ່ນພາສາອັງກິດ, ດັ່ງນັ້ນ ບຸກຄົນທີ່ເວົ້າພາສາມືຈະມີຄວາມສາມາດທີ່ແຕກຕ່າງກັນໃນການເຂົ້າໃຈພາສາອັງກິດແບບເປັນລາຍລັກອັກສອນ.*

**ຕົວຢ່າງ 2:** ການຈັດກຽມໃຫ້ມີຜູ້ຈົດບັນທຶກ ອາດຈະພຽງພໍແລ້ວສຳລັບການປະຊຸມລະຫວ່າງຜູ້ຮັບຜິດຊອບກໍລະນີ ກັບ ພໍ່ແມ່, ແຕ່ການປະຊຸມທີ່ຊັບຊ້ອນກວ່າເຊັ່ນ: ການປະຊຸມລົງຄຳຕັດສິນຂອງທີມງານຄອບຄົວ, ກອງປະຊຸມວາງແຜນຮ່ວມກັນ ແລະ ອື່ນໆ ອາດຈະຮຽກຮ້ອງໃຫ້ມີການບັນຍາຍແບບທັນເຫດການ.

ຖ້າທ່ານເຊື່ອວ່າ ທ່ານມີກໍລະນີທີ່ກ່ຽວຂ້ອງກັບບຸກຄົນທີ່ມີຄວາມພິການ ທີ່ອາດຈະຮຽກຮ້ອງໃຫ້ມີການດັດແກ້ທີ່ສົມເຫດສົມຜົນ ຫຼື ການຊ່ວຍເຫຼືອ ຫຼື ການບໍລິການ ເພື່ອຮັບປະກັນໃຫ້ມີການຕິດຕໍ່ສື່ສານທີ່ມີປະສິດທິພາບ, ກະລຸນາຕິດຕໍ່ຜູ້ປະສານງານ ADA ຂອງ DCYF ທີ່ເບີ 360-480-7230 ຫຼື ທາງອີເມວທີ່ **dcyf.adaaccessibility@dcyf.wa.gov.**

---

*DCYF ບໍ່ມີການຈຳແນກ ແລະ ໃຫ້ການເຂົ້າເຖິງໂຄງການ ແລະ ການບໍລິການຕ່າງໆຂອງຕົນແບບເທົ່າທຽມກັນໃຫ້ແກ່ທຸກຄົນ ໂດຍບໍ່ຄຳນຶງເຖິງເຊື້ອຊາດ, ສີຜິວ, ເພດ, ສາດສະໜາ, ຄວາມເຊື່ອຖື, ສະຖານະພາບການແຕ່ງງານ, ຊາດກຳເນີດ, ການເປັນພົນລະເມືອງ ຫຼື ສະຖານະພາບການເຂົ້າເມືອງ, ອາຍຸ, ລົດນິຍົມທາງເພດ ຫຼື ຮູບປະພັນທາງເພດ, ສະຖານະນັກຮົບເກົ່າ ຫຼື ທະຫານ, ສະຖານະໃນການເປັນແມ່ທີ່ກຳລັງໃຫ້ນົມລູກ ແລະ ການປມີຄວາມພິການທາງດ້ານຮ່າງກາຍ, ຄວາມຮູ້ສຶກ ຫຼື ຈິດໃຈ ຫຼື ການນຳໝານຳທາງ ຫຼື ສັດທີ່ໃຫ້ບໍລິການຊ່ວຍເຫຼືອ. ຖ້າທ່ານຕ້ອງການສຳເນົາຂອງເອກະສານນີ້ໂດຍບໍ່ເສຍຄ່າໃນຮູບແບບອື່ນ ຫຼື ພາສາອື່ນ, ກະລຸນາຕິດຕໍ່ DCYF Constituent Relations (ຫ້ອງການປະຊາສຳພັນກັບຜູ້ມີສ່ວນຮ່ວມຂອງ DCYF) ທີ່ເບ 1-800-723-4831 ຫຼື ສົ່ງອີເມວຫາ **communications@dcyf.wa.gov**.*

DCYF PUBLICATION ADM_0024 LA (03-2024) Lao